ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 18 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 03 ພຶດສະພາ 2019

ສໍານັກງານ ຄຄຊ
ຮັບ ເລກທີ 01436
ວັນທີ 06 MAY 2019
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈໍາອາທິດທີ 15-19/04/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0.60% ທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດຂອງສະຫະລັດອາເມລິກາປັບຕົວດີຂຶ້ນ ເຫັນໄດ້ຈາກຕົວເລກຂາດດຸນການຄ້າຫຼຸດລົງໃນເດືອນ 2/2019 ຢູ່ໃນລະດັບ 49,40 ຕື້ໂດລາ ຈາກຂາດດຸນ 51,10 ຕື້ໂດລາ ໃນເດືອນຜ່ານມາ. ພ້ອມນັ້ນ, ປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທໍາອິດໃນອາທິດນີ້ ຫຼຸດລົງ ຢູ່ໃນລະດັບ 192.000 ຄົນຈາກຈໍານວນ 197.000 ຄົນໃນອາທິດທີ່ຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 5/04-11/04/2019 | ອາທິດນີ້ 12/04-18/04/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1313 | 1,1246 | 0,60% |
| ເຢນ/ໂດລາ | 111,87 | 111,92 | -0,04% |
| ບາດ/ໂດລາ | 31,790 | 31,830 | 0,13% |
| ເປໂຊ/ໂດລາ | 51,75 | 51,69 | 0,10% |
| ຣູເປັຍ/ໂດລາ | 14.095,00 | 14.045,00 | 0,36% |
| ໂດລາສິງກະໂປ/ໂດລາ | 1,3545 | 1,3554 | -0,07% |
| ຢວນ/ໂດລາ | 6,7130 | 6,7049 | 0,12% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 0,03% ເປັນ 64,17 ໂດລາ/ບາເຣວ ເນື່ອງຈາກອັດຕາສ່ວນການກັ່ນນ້ຳມັນດິບຂອງໂຮງກັ່ນນ້ຳມັນດິບຂອງ ສປ ຈີນ ໃນເດືອນ ມີນາ 2019 ເພີ່ມຂຶ້ນ 3,20% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຊຶ່ງເຮັດໃຫ້ກຳລັງການຜະລິດນ້ຳມັນດິບເພີ່ມຂຶ້ນຢູ່ທີ່ລະດັບ 12,49 ລ້ານບາເຣວ/ວັນ;
- ລາຄາຄຳ ຫຼຸດລົງ 1,43% ເປັນ 1.275,75 ໂດລາ/ອອນ ເນື່ອງຈາກເງິນໂດລາແຂງຄ່າ ເຮັດໃຫ້ນັກລົງທຶນຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ແລະ ຊື້ເງິນໂດລາ ເພື່ອເກງກຳໄລ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,08% ແລະ ອ່ອນຄ່າລົງ 0,26% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,03% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 3,71% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 5/04-11/04/2019 | | | ອາທິດນີ້ 12/04-18/04/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.682,56 | 8.717,01 | 8.697,85 | 8.687,67 | 8.717,41 | 8.704,49 | -0,06% | -0,005% | -0,08% | -0,99% | -1,03% | -1,03% |
| ບາດ | 276,11 | 276,99 | 276,56 | 276,19 | 277,91 | 277,27 | -0,03% | -0,33% | -0,26% | -3,62% | -3,76% | -3,71% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,42% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ ເພີ່ມຂຶ້ນ 15,79%.
- ປະລິມານເງິນ M2 ເພີ່ມຂຶ້ນ 0,93% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,79%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ, ລະຫວ່າງ ທຫລ ກັບ ທທກ, ທະນາຄານທຸລະກິດດ້ວຍກັນ ແລະ ທຫລ ກັບພາກສ່ວນອື່ນໆ ປະຈຳອາທິດ (12-18/04/2019) ແມ່ນບໍ່ມີການເຄື່ອນໄຫວເນື່ອງຈາກໄລຍະດັ່ງກ່າວແມ່ນເປັນວັນພັກລັດຖະການຊົມເຊີຍວັນປີໃໝ່ລາວ ພສ 2562.

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 04/2019 ຄາດວ່າຈະຢູ່ໃນລະດັບ 1,97%.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປລາວ ໄດ້ມີກະແສເງິນໄຫຼເຂົ້າສຸດທິ ຜ່ານລະບົບທະນາຄານ ຈຳນວນ 68,15 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (12-18/04/2019) ກະແສເງິນໄຫຼເຂົ້າ ມີຈຳນວນ 110,99 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການກູ້ຢືມຂອງຫົວໜ່ວຍທຸລະກິດ ຈຳນວນ 74,41 ລ້ານໂດລາສະຫະລັດ, ຮັບຈາກການສົ່ງ

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ອອກສິນຄ້ານຳເຂົ້າ ຈຳນວນ 22,29 ລ້ານໂດລາສະຫະລັດ ແລະ ຮັບຈາກການໃຫ້ບໍລິການ ຈຳນວນ 9,87 ລ້ານໂດລາສະຫະລັດ). ກະແສເງິນໄຫຼອອກມີ ຈຳນວນ 42,84 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່າສິນຄ້ານຳເຂົ້າ ຈຳນວນ 26,93 ລ້ານໂດລາສະຫະລັດ, ອະນຸພັນທາງການເງິນ ຈຳນວນ 7,24 ລ້ານໂດລາສະຫະລັດ ແລະ ຊຳລະຄ່າບໍລິການ ຈຳນວນ 3,55 ລ້ານໂດລາສະຫະລັດ).

3. <u>ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ</u>

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 366 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 262 ສະບັບ, ລວມມູນຄ່າໂອນທັງໝົດ 0,26 ຕື້ກີບ, ທຽບໃສ່ອາທິດຜ່ານມາ ຫຼຸດລົງ 294,38 ຕື້ກີບ ເທົ່າກັບ 99,91%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (12-18/4/2019) ມີທັງໝົດ 1.631 ຄັ້ງ ຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 1.359 ຕື້ກີບຈາກ 1.786,95 ຕື້ກີບມາເປັນ 428,16 ຕື້ກີບ ເທົ່າກັບ 76,03%. ສຳລັບ, ກະຊວງການເງິນ ບໍ່ມີການເຄື່ອນໄຫວ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 810,32 ຈຸດ ຫຼຸດລົງ ຈາກ 812,62 ຈຸດ ຫຼື ເທົ່າກັບ 0,28% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 101.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 515,74 ລ້ານກີບ ຫຼຸດລົງ 19,70% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ 33,26% ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ BCEL ແລະ EDL-GEN.

**<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>**

| ບໍລິສັດ | ອາທິດນີ້ (05/04-11/04/2019) | | | ອາທິດນີ້ (12/04-18/04/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (%) |
| **BCEL** | 83.800 | 471.770.000 | 5.650 | 69.000 | 389.250.000 | 5.600 | -17,66 | -17,49 | -0,88 |
| **EDL-GEN** | 35.500 | 140.250.000 | 3.950 | 32.100 | 126.197.000 | 3.940 | -9,58 | -10,02 | -0,25 |
| **LWPC** | - | - | 7.150 | - | - | 7.150 | - | - | - |
| **PTL** | 100 | 100.000 | 1.000 | - | - | 1.000 | -100 | -100 | - |
| **SVN** | 1.000 | 2.200.000 | 2.200 | - | - | 2.200 | -100 | -100 | - |
| **PCD** | - | - | 1.070 | - | - | 1.070 | - | - | - |
| **LCC** | 200 | 440.000 | 2.200 | - | - | 2.200 | -100 | -100 | - |
| **MHTL** | 6.500 | 19.375.000 | 2.950 | 100 | 295.000 | 2.950 | -98,46 | -98,48 | - |
| **LAT** | 11.200 | 8.120.000 | 725 | - | - | 725 | -100 | -100 | - |
| ທັງໝົດ | 138.300 | 642.255.000 | | 101.200 | 515.742.000 | | -26,83 | -19,70 | |

5. ວຽກງານອື່ນໆທີ່ພົ້ນເດັ່ນ.

- **ທຫລ ໄດ້ຮ່ວມກອງປະຊຸມ ແລະ ປຶກສາຫາລືວຽກງານທີ່ຈຳເປັນຈຳນວນໜຶ່ງເປັນຕົ້ນ:** ❶ ກອງປະຊຸມປຶກສາຫາລືແລກປ່ຽນບົດຮຽນກ່ຽວກັບການກູ້ຢືມ ແລະ ການຄ້ຳປະກັນ ແລະ ❷ກອງປະຊຸມສຳມະນາຫົວຂໍ້ "ການແກ້ໄຂບັນຫາໜີ້ທີ່ບໍ່ເກີດດອກອອກຜົນ" ຢູ່ປະເທດມາເລເຊຍ. ພ້ອມກັນນັ້ນ, ຊາວໜຸ່ມ ທຫລ ຈຳນວນໜຶ່ງກໍ່ໄດ້ເຂົ້າຮ່ວມຢ້ຽມຊົມຫໍພິພິດທະພັນທ່ານ ໄກສອນ ພົມວິຫານ (ຫຼັກ 6) ເນື່ອງໃນໂອກາດວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ແລະ ຕິດພັນກັບວັນສ້າງຕັ້ງຊາວໜຸ່ມປະຕິວັດລາວ ຄົບຮອບ 64 ປີ.
- **ທຫລ ໄດ້ຈັດກອງປະຊຸມພາຍໃນ ເພື່ອປຶກສາຫາລືທາງດ້ານວິຊາການທີ່ສຳຄັນ ແລະ ວຽກງານປົ່ນອ້ອມຈຳນວນໜຶ່ງເປັນຕົ້ນ:** ກອງປະຊຸມປຶກສາຫາລືກ່ຽວກັບການເຜີຍແຜ່ບົດລາຍງານຜົນການວິເຄາະຂໍ້ມູນການສຳຫຼວດ ກອງທຶນບ້ານໃນທົ່ວປະເທດໃນປີ 2017.
- **ທຫລ ໄດ້ສຳເລັດວຽກງານວິຊາສະເພາະທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ອະນຸມັດ ແລະ ເຜີຍແຜ່ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂປຼແກຣບັນຊີ ທຫລ; ❷ອອກຂໍ້ຕົກລົງກ່າວເຕືອນ ທທກ 1 ແຫ່ງ ທີ່ລະເມີດລະບຽບທີ່ ທຫລ ວາງອອກ; ❸ລົງກວດກາປະຈຳປີ 2018 ຂອງ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ອາລຸນໃໝ່, ສະສົມຊັບ ແລະ ເນັກ ແລະ ❹ສຳເລັດການຕິດຕັ້ງ Certificate Authority ໃສ່ Domain ຂອງເວັບໄຊສ໌ ທຫລ, ລະບົບຂໍ້ມູນຂ່າວສານສິນເຊື່ອ, ລະບົບ ອີເມວ ທຫລ ແລະ ລະບົບຂອງສຳນັກງານຕ້ານການຟອກເງິນ.
- **ທຫລ ໄດ້ຕ້ອນຮັບ**ຄະນະຜູ້ແທນຂັ້ນສູງຈາກ ທະນາຄານປະຊາຊົນຈີນ ເພື່ອເຂົ້າພົບປະການນຳລັດຖະບານຂັ້ນສູງຂອງ ສປປ ລາວ.

III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ.
- **ທຫລ ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກ ເພື່ອປຶກສາຫາລືວຽກງານທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມລັດຖະບານປະຈຳເດືອນ ເມສາ 2019 ແລະ ❷ ກອງປະຊຸມສຸດຍອດກ່ຽວກັບອຸດສາຫະກຳບໍລິການດ້ານການເງິນລະດັບໂລກ ປີ 2019 ຢູ່ ສປ ຈີນ.
- **ທຫລ ກະກຽມຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆເປັນຕົ້ນ:** ❶ກອງປະຊຸມຄົ້ນຄວ້າຊຸກຍູ້ພັນທະບັດລັດຖະບານ ເຂົ້າຈົດທະບຽນໃນ ຕະຫຼາດຫຼັກຊັບລາວ; ❷ກອງປະຊຸມປຶກສາຫາລືກ່ຽວກັບການຂໍຮັບຮອງການເພີ່ມທຶນ ແລະ ການໂອນຮຸ້ນຂອງບໍລິສັດ ເດັບໂກ ເຊົ່າສິນເຊື່ອ ລາວ ຈຳກັດ ແລະ ❸ ຊາວໜຸ່ມຮາກຖານ ທຫລ ຍົກລະດັບຄວາມຮູ້ກ່ຽວກັບວຽກງານພັດທະນາແບບຍືນຍົງ ແລະ ການປະກອບສ່ວນຂອງ ທຫລ.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ພຸມມະລີ ສີຣິພົນເດດ